ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 122 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 28 ມັງກອນ 2026

# ແຈ້ງການ

ຮຽນ: ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ທີ່ເຄົາລົບ.

ເລື່ອງ: ການຂໍຫັນການຈົດທະບຽນສຳມະໂນຄົວແບບເກົ່າ ມາເປັນການຈົດທະບຽນສຳມະໂນຄົວແບບເອເລັກໂຕຣນິກ ແບບທັນສະໄໝ.

- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 547/ນຍ, ລົງວັນທີ 26 ສິງຫາ 2025;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021;
- ອີງຕາມ ບົດລາຍງານ ຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 52/ປກສ, ລົງວັນທີ 25 ທັນວາ 2025;
- ອີງຕາມ ການຕົກລົງ ແລະ ຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 31 ທັນວາ 2025.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້:

1. ເຫັນດີ ໃຫ້ກະຊວງປ້ອງກັນຄວາມສະຫງົບ ອອກແຈ້ງການຢຸດເຊົາການອອກປຶ້ມສຳມະໂນຄົວໃຫ້ພົນລະເມືອງລາວແບບເກົ່າ ແລະ ຫັນມານຳໃຊ້ ໜັງສືຢັ້ງຢືນຂໍ້ມູນສຳມະໂນຄົວ (ແບບຟອມ ສຄ 07) ຕາມລະບຽບການຂອງກະຊວງປ້ອງກັນຄວາມສະຫງົບ ເພື່ອປ່ຽນແທນການນຳໃຊ້ປຶ້ມສຳມະໂນຄົວແບບເກົ່າ.

2. ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ:

- ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າສ້າງນິຕິກຳ ແລະ ລະບຽບການ ເປັນອັນລະອຽດ ກ່ຽວກັບວິທີການ, ຂັ້ນຕອນ ການຈົດທະບຽນສຳມະໂນຄົວແບບເອເລັກໂຕຣນິກທັນສະໄໝ ແລ້ວລາຍງານລັດຖະບານ ເພື່ອພິຈາລະນາ.
- ໃຫ້ສືບຕໍ່ແຈ້ງບຸກຄົນ ແລະ ຄອບຄົວ ທີ່ມີປຶ້ມສຳມະໂນຄົວແລ້ວ ແຕ່ຍັງບໍ່ທັນໄດ້ປ້ອນຂໍ້ມູນເຂົ້າໃນລະບົບຖານຂໍ້ມູນ ພົນລະເມືອງ ແລະ ບັດປະຈຳຕົວ ແມ່ນສາມາດນຳໃຊ້ປຶ້ມສຳມະໂນຄົວໄດ້ ໃນການປະກອບເອກະສານເຮັດທຸລະກຳຕ່າງໆ, ສ່ວນບຸກຄົນ ແລະ ຄອບຄົວ ທີ່ມີຂໍ້ມູນສຳມະໂນຄົວຢູ່ໃນລະບົບແລ້ວ ແມ່ນໃຫ້ນຳໃຊ້ ໜັງສືຢັ້ງຢືນຂໍ້ມູນສຳມະໂນຄົວ (ແບບຟອມ ສຄ 07) ປ່ຽນແທນ ຕາມການກຳນົດຂອງກະຊວງປ້ອງກັນຄວາມສະຫງົບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຮັກສາການ ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເຂັ້ມ ແກ້ວບຸນຈັນ

<u>ບ່ອນນຳສົ່ງ</u>

| | | |
|---|---|---|
| 1. | ທ່ານນາຍົກ-ຮອງນາຍົກລັດຖະມົນຕີ | 05 ສະບັບ |
| 2. | ທ່ານ ຫົວໜ້າຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. | ທ່ານ ຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ | 01 ສະບັບ |
| 4. | ຫ້ອງວ່າການສະພາແຫ່ງຊາດ | 01 ສະບັບ |
| 5. | ຄະນະ ຫສນຍ ທ່ານລະ | 01 ສະບັບ |
| 6. | ສຳເນົາ | 01 ສະບັບ |